Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 102-109
https://doi.org/10.69692/SUJMRD100102

# Participating in the Production of Silk Handicrafts in Phonxay Village, Luangprabang City

Sone Vongphachit, Thipphavanh DOUNAGVILAIKEO, Saythala SAYBOUNHUENG
*Department of Business Administration, Souphanouvong University, Lao PDR*

***Correspondence:** Sone VONGPHACHIT, Office of Industrial and Commerce Luang Prabang City Lao PDR, Tel: +856202346868. E-mail: sonevongphachit6868@gmail.com*

***Article Info:***
*Submitted: June 20, 2024*
*Revised: July 30, 2024*
*Accepted: August 07, 2024*

## Abstract

This study aim to study the participation in the production of silk handicrafts in Phon Xai Village, Luangprabang District, as a quantitative research which used questionnaires to collect data from a sample group of 98 people and analyze the data with the statistical program SPSS version 20. The results of the study found that people are most involved in the production and service of silk products, participation in marketing, participation in skills in silk production, and participation in administration and management Production of silk with the average total value is between 0.36-0.42 and the standard deviation is between 0.10-0.65. People are involved in the medium level of participation in the use of information technology and participation in the use of internal potential in production and services, with an average total value between 0.28-0.32 and a standard deviation value between 0.10-0.11.

**Key words:** Production, participation, silk craft, Phonxay village

## 1 ພາກສະເໜີ

ໃນປັດຈຸບັນຂະແໜງອຸດສາຫະກຳ-ຫັດຖະກຳໄດ້ເຂົ້າມາມີບົດບາດສຳຄັນຕໍ່ເສດຖະກິດຂອງ ສປປ ລາວ ໂດຍສະເພາະໃນທ້ອງຖິ່ນໄດ້ຖືເອົາຂະແໜງຫັດຖະກຳເປັນທຸລະກິດປາຍແຫຼມຂອງທ້ອງຖິ່ນຕົນເພື່ອເປັນການພັດທະນາເສດຖະກິດ-ສັງຄົມ, ພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍອີງຕາມທ່າແຮງຂອງໂຄງສ້າງເສດຖະກິດໃນ ສປປ ລາວ ທີ່ປະກອບດ້ວຍ 3 ຂະແໜງການຄື: ຂະແໜງການກະສິກຳ, ຂະແໜງອຸດສາຫະກຳ-ຫັດຖະກຳ ແລະ ຂະແໜງການບໍລິການເພື່ອເປັນການຫັນເອົາຈຸດພິເສດຂອງແຂວງຕົນເອງມາເປັນທ່າແຮງໃນການພັດທະນາເສດຖະກິດໂດຍສະເພາະແມ່ນຂະແໜງການທ່ອງທ່ຽວ ເຊິ່ງໃນນັ້ນສິນຄ້າຫັດຖະກຳມີຄວາມກ່ຽວຂ້ອງກັບວຽກງານດ້ານການທ່ອງທ່ຽວໂດຍກົງທີ່ສະໜອງສິນຄ້າປະເພດຂອງທີ່ລະນຶກ ແລະ ສິນຄ້າອຸປະໂພກສະ (ພາແຫ່ງຊາດ, 2008); (Sioudomphan et al., 2021). ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານໂພນໄຊໃຫ້ດີຂຶ້ນຂະແໜງຫັດຖະກຳເປັນຂະແໜງໜຶ່ງທີ່ມີຄວາມສຳຄັນໂດຍສະເພາະແມ່ນຫັດຖະກຳຕໍ່າແຜ່ນແພ ເຊິ່ງມີມາແຕ່ບູຮານ ແລະ ຊະນິດຜ້າແພ, ແຕ່ລະລວດລາຍຂອງຜ້າແພທີ່ຕໍ່ານັ້ນໄດ້ສື່ໃຫ້ຮູ້ເຖິງເອກະລັກຂອງຄົນລາວ ແລະ ເປັນຂະແໜງໜຶ່ງທີ່ນຳໃຊ້ສີມືແຮງງານຂອງແມ່ຍິງເປັນສ່ວນໃຫ່ຍືກຸ່ມຫັດຖະກຳແຫ່ງນີ້ຍັງມີຄວາມສຳຄັນຄື ຊ່ວຍໃຫ້ປະຊາຊົນນັ້ນຢຸດການຖາງປາເຮັດໄຮ່ເປັນສ່ວນຫຼາຍ ແລະ ໄດ້ມາປະກອບອາຊີບຕໍ່າແຜ່ນແພທົດແທນ, ຕັ້ງແຕ່ມີກຸ່ມຫັດຖະກຳກໍ່ຊ່ວຍເຮັດໃຫ້ສະມາຊິກພາຍໃນຄອບຄົວໃນກຸ່ມກຸ້ມຢູ່ກຸ້ມກິນ, ມີລາຍໄດ້ເພີ່ມຂຶ້ນ (ອິນສີມພອນ ພ້ອມດ້ວຍຄະນະ ,2024).

ຜົນງານວິໄຈຄົ້ນຄວ້າຫຼາຍສະບັບໄດ້ຊີ້ໃຫ້ເຫັນວ່າແນວທາງການມີສ່ວນຮ່ວມ ການສ້າງມູນຄ່າເພີ່ມໃຫ້ແພໄໝແມ່ນສິ່ງເສີມໃຫ້ມີການຜະລິດໃນທ້ອງຖິ່ນຫຼາຍຂຶ້ນເພື່ອຫຼຸດຜ່ອນການນຳເຂົ້າເສັ້ນໄໝຈາກຕ່າງປະເທດອັນເປັນເຫດ

ທີ່ເຮັດໃຫ້ຕົ້ນທຶນການຜະລິດສູງ, ສົ່ງເສີມການຜະລິດເສັ້ນໄໝຈາກການຈ້າງງານຄົນໃນທ້ອງຖິ່ນທີ່ເຮັດວຽກກ່ຽວກັບສາຍງານທີ່ກ່ຽວຂ້ອງເຊັ່ນ: ການປູກມອນເພື່ອລ້ຽງມ້ອນ, ການສາວໄໝເປັນຕົ້ນ, ສົ່ງເສີມໃຫ້ມີການຈັດເຝິກອົບຮົມບຸກຄະລາກອນ, ການໃຫ້ຂໍ້ມູນປະຫວັດຂອງຜະລິດຕະພັນຂະຫຍາຍຕະຫຼາດໄປຍັງຕາສງປະເທດ ແລະ ສຶກສາຊ່ອງທາງໃນການເພີ່ມປະລິມານການຜະລິດໃຫ້ຫຼາຍຂຶ້ນເພື່ອແຂ່ງຂັນກັບອາກອນທີ່ສູງ (ດວງດາລາ ແລະ ສົມບັດຈະເລີນ, 2015); (Tariq and Tapan, 2014); (Government of Tamilnadu, 2015). ມັນແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນຕໍ່ກັບການພັດທະນາເສດຖະກິດສັງຄົມຂອງຊາດເວົ້າລວມໂດຍສະເພາະແມ່ນການຜະລິດເຄື່ອງຫັດຖະກຳບໍ່ວ່າຈະເປັນການຕ່ຳແຜ່ນແພເສື້ອໄໝ, ສິ້ນໄໝ, ຜ້າບ່ຽງທີ່ລວດລາຍສວຍງາມອັນປານີດແລ້ວຍັງມີການຜະລິດເຈ້ຍປໍສາທີ່ເປັນຜະລິດຕະພັນທີ່ຄົນນິຍົມຫຼາຍຮອງຈາກການຜະລິດເຄື່ອງຫັດຖະກຳຕ່ຳແຜ່ນທັງສອງຢ່າງນີ້ລ້ວນແລ້ວແຕ່ນຳໃຊ້ພືດ, ເຄື່ອງປ່າຂອງດົງຈາກທຳມະຊາດເຂົ້າໃນການຜະລິດໂດຍແມ່ນການຜະລິດສິນຄ້າເຄື່ອງຫັດຖະກຳເປັນການອະນຸລັກວັດທະນາທຳທີ່ມີມາແຕ່ດົນນານແລ້ວນັ້ນຍັງເປັນການສະແດງໃຫ້ຄົນລາວເຮົາສາມາດຜະລິດໄດ້ໂດຍຝີໄມ້ລາຍມືຂອງຕົນເອງ (ພະແນກມາດຕະຖານອຸດສາຫະກຳກົມອຸດສາຫະກຳ, 2007). ຈາກບັນຫາທີ່ໄດ້ກ່າວມາຂ້າງເທິງນີ້ ຜູ້ຄົ້ນຄວ້າຈຶ່ງມີຈຸດປະສົງເພື່ອ ສຶກສາສາດສະພາບການມີສ່ວນຮ່ວມໃນການຜະລິດຫັດຖະກຳຕ່ຳຜ້າໄໝ ບ້ານໂພນໄຊ ນະຄອນຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ຈຳນວນ ປະຊາກອນທີ່ມີກີ່ຕ່ຳຫູກທັງໝົດ 98 ກີ່ ສະນັ້ນ, ການສຶກສາຄັ້ງນີ້ ຈຶ່ງໄດ້ເລືອກກຸ່ມຕົວຢ່າງດ້ວຍຮູບແບບ Convenience Sampling (Sampling, n.d.). ເນື່ອງຈາກບ້ານເປົ້າໝາຍມີກີ່ຕ່ຳຫູກບໍ່ຫຼາຍ ຈຶ່ງໄດ້ເລືອກເອົາທັງໝົດເພື່ອເປັນກຸ່ມຕົວຢ່າງໃນການຄົ້ນຄວ້າ.

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ການສຶກສາຄັ້ງນີ້ເປັນແບບປະລິມານ ສະນັ້ນ ເພື່ອໃຫ້ສອດຄ່ອງກັບຈຸດປະສົງຂອງການສຶກສາໂດຍໃຊ້ແບບສອບຖາມ ເພື່ອເກັບຂໍ້ມູນຈາກກຸ່ມຕົວຢ່າງທັງໝົດ ເຊິ່ງ ໄດ້ມີການອອກແບບໂດຍໃຫ້ຄຳຕອບດ້ວຍ 5 ລະດັບຂອງ (Likert, 1932) ແລະ ໄດ້ມີການຫາຄ່າຄວາມຊອດຄ່ອງຂອງເຄື່ອງມືດັ່ງນີ້:

ການຫາຄ່າຄວາມຊອດຄ່ອງ ຊຶ່ງຜູ້ຄົ້ນຄວ້າຮັບໂຮມເອົາເອົາບັນດາຂໍ້ມູນທີ່ກ່ຽວຂ້ອງ ແລະ ດັດປັບເຂົ້າໃນການສ້າງແບບສອບຖາມໃຫ້ຕົງກັບຈຸດປະສົງຂອງການຄົ້ນຄວ້າ ພາຍຫຼັງສ້າງແບບສອບຖາມສຳເລັດແລ້ວ ໄດ້ສົ່ງໄປໃຫ້ຜູ້ຊ່ຽວຊານ 3 ທ່ານປະເມີນຄວາມຊອດຄ່ອງແຕ່ລະຂໍ້ຂອງແບບສອບຖາມ ເຊິ່ງເຫັນວ່າແຕ່ລະຂໍ້ມີຄ່າຄວາມຊອດຄ່ອງຢູ່ໃນລະຫວ່າງ0.56-1.

### 2.3 ການເກັບກຳຂໍ້ມູນ

ຜູ້ຄົ້ນຄວ້າໄດ້ເຮັດໜັງສືສະເໜີ ຜ່ານຫ້ອງການປົກຄອງ ນະຄອນຫຼວງພະບາງ ແລະ ນາຍບ້ານ ບ້ານໂພນໄຊເພື່ອຂໍອະນຸຍາດລົງເກັບກຳຂໍ້ມູນ ຈາກນັ້ນຈຶ່ງໄດ້ນຳເອົາແບບສອບຖາມໄປຢາຍໃຫ້ກຸ່ມປະຊາກອນ ໂດຍການອະທິບາຍວິທີການຕອບໃຫ້ແຕ່ລະທ່ານ ເພື່ອໃຫ້ກຸ່ມຕົວຢ່າງເຂົ້າໃຈຕອບຕາມຄວາມເປັນຈິງ ແລະ ໃຫ້ເວລາການຕອບແບບສອບຖາມ 5-10 ນາທີ ພາຍຫຼັງທີ່ຕອບແບບສອບຖາມສຳເລັດແລ້ວ ຜູ້ຄົ້ນຄວ້າໄດ້ເກັບແບບສອບຖາມຄືນພ້ອມໂດຍທັນທີ ຊຶ່ງສາມາດເກັບແບບສອບຖາມຄືນທັງໝົດໄດ້ຮ້ອຍສ່ວນຮ້ອຍ.

### 2.4 ການວິເຄາະຂໍ້ມູນ

ພາຍຫຼັງເກັບກຳຂໍ້ມູນສຳເລັດ ແມ່ນໄດ້ນຳຂໍ້ມູນຈາກແບບສອບຖາມມາ ວິເຄາະ ໂດຍໃຊ້ໂປຼແກມ SPSS ເພື່ອຫາຄ່າ ຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation) ຂອງການມີສ່ວນຮ່ວມໃນການພັດທະນາຫັດຖະກຳຜ້າໄຫມ.

## 3. ຜົນໄດ້ຮັບ

ຈາກການຄົ້ນຄວ້າເຫັນວ່າປະຊາຊົນມີສ່ວນຮ່ວມໃນການຜະລິດຕະພັນໃຫມ່ ແລະ ສ້າງມູນຄ່າເພີ່ມໃຫ້ກັບຜະລິດຕະພັນຜ້າໄໝ ຢູ່ໃນລະດັບຫຼາຍກວ່າໝູ່ ດ້ວຍຄ່າສະເລຍ X=0.42 ແລະ ຄ່າ SD=0.61, ຮອງລົງມາແມ່ນ ມີການຊອກຫາຂໍ້ມູນກ່ຽວກັບຄວາມຕ້ອງການຂອງລູກຄ້າ ດ້ວຍຄ່າສະເລຍ X=0.42 ແລະ ຄ່າ SD=0.72, ຕາມມາດ້ວຍການຄວບຄຸມຕົ້ນທຶນການຜະລິດຫັດຖະກຳຜ້າໄໝ ດ້ວຍຄ່າສະເລຍ X=0.41 ແລະ ຄ່າ SD=0.62, ທັດມາແມ່ນການຄວບຄຸມຄຸນນະພາບຂອງຜະລິດຕະພັນຜ້າໄໝ ດ້ວຍຄ່າສະເລຍ X=0.41 ແລະ ຄ່າ SD=0.66 ແລະ ສຸດທ້າຍແມ່ນ ການອອກແບບຜະລິດຕະພັນຜ້າໄໝສອດຄ່ອງກັບຄວາມຕ້ອງການຂອງລູກຄ້າໃນປັດຈຸບັນ ດ້ວຍຄ່າສະເລຍ X=0.41 ແລະ ຄ່າ SD=0.71 (ຕາຕະລາງ 1).

ໃນຕາຕະລາງທີ 2 ສາມາດເຫັນໄດ້ວ່າ ປະຊາຊົນມີສ່ວນຮ່ວມໃນດ້ານການກຳນົດສ່ວນແບ່ງການຕະຫຼາດຜະລິດ ຕະພັນຜ້າໄໝຫຼາຍກ່ວໝູ່ ດ້ວຍຄ່າສະເລຍ X=0.42 ແລະ ຄ່າ SD=0.60, ຮອງລົງມາແມ່ນ ການສ້າງຄວາມໄດ້ປຽບທາງດ້ານລາຄາຜະລິດຕະພັນຜ້າໄໝ ດ້ວຍຄ່າສະເລຍ X=0.40 ແລະ ຄ່າ SD=0.80, ທັດມາແມ່ນການກຳນົດລູກຄ້າເປົ້າຫມາຍຂອງຜະລິດຕະພັນຜ້າໄໝ ດ້ວຍຄ່າສະເລຍ X=0.40 ແລະ ຄ່າ SD=0.78, ຕໍ່ມາແມ່ນການຊອກຊ່ອງທາງຈັດຈຳໜ່າຍຜະລິດ ຕະພັນຜ້າໄໝ ດ້ວຍຄ່າສະເລຍ X=0.38 ແລະ ຄ່າ SD=0.87, ແລະ ສຸດທ້າຍແມ່ນ ດ້ານມີການສົ່ງເສີມການຕະຫຼາດຂອງຜະລິດຕະພັນຜ້າໄໝ.

ດ້ານເຕັກໂນໂລຊີຂໍ້ມູນຂ່າວສານເຫັນວ່າປະຊາຊົນມີການນຳໃຊ້ເຕັກໂນໂລຊີເຂົ້າໃນການໂຄສະນາຜະລິດຕະພັນຜ້າໄໝ, ການໄດ້ຮັບຂໍ້ມູນຂ່າວສານກ່ຽວກັບຫັດຖະກຳຜ້າໄໝຈາກໜ່ວຍງານທີ່ກ່ຽວຂ້ອງ, ການພັດທະນາລະບົບຂໍ້ມູນຂ່າວສານການພັດທະນາຜະລິດຕະພັນຜ້າໄໝ, ການສ້າງຖານຂໍ້ມູນລູກຄ້າໄວ້ຢ່າງສະໝ່ຳສະເໝີ ແລະການນຳໃຊ້ເຕັກໂນໂລຊີມາໃຊ້ເຂົ້າໃນຂະບວນການຜະລິດຜ້າໄໝ ທັງໝົດແມ່ນຢູ່ໃນລະດັບປານກາງ ດ້ວຍຄ່າສະເລຍຢູ່ໃນລະຫວ່າງ X=0.27 ຫາ 0.29 ແລະ ຄ່າ SD ຢູ່ໃນລະຫວ່າງ 0.10 ຫາ 0.13 (ຕາຕະລາງ 3).

ການມີສ່ວນຮ່ວມດ້ານການຜະລິດ ແລະ ບໍລິການເຫັນວ່າປະຊາຊົນມີການນຳໃຊ້ແຮງງານໃນຊຸມຊົນເຂົ້າໃສ່ໃນການຜະລິດຜ້າໄໝ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລຍ X=0.35 ແລະ ຄ່າ SD=0.12, ສ່ວນດ້ານມີການນຳໃຊ້ອຸປະກອນທີ່ທັນສະໄໝເຂົ້າໃນການຜະລິດ,ຫນ່ວຍງານອອກແບບ ແລະ ການມີສ່ວນຮ່ວມໃນການພັດທະນາລວດລາຍຜ້າໄໝ, ການນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຜະລິດຫັດຖະກຳຜ້າໄໝ ແລະ ຂະບວນການຜະລິດທີ່ຫຼາກຫຼາຍເຂົ້າໃນການຜະລິດຫັດຖະກຳຜ້າໄໝ ແມ່ນ ຢູ່ໃນລະດັບປານກາງ ດ້ວຍຄ່າສະເລຍ X ຢູ່ໃນລະຫວ່າ 0.31 ຫາ 0. 35 ແລະ ຄ່າ SD ຢູ່ໃນລະຫວ່າງ 0.11 ຫາ 0.13 (ຕາຕະລາງ 4).

ການມີສ່ວນຮ່ວມດ້ານການສົ່ງເສີມສີມືແຮງງານໃນການຜະລິດຜ້າໄໝ ເຫັນວ່າ ມີການໃຫ້ລາງວັນ ແລະ ຜົນຕອບແທນແກ່ສະມາຊິກຜູ້ທີ່ມີຜົນງານດີເດັ່ນ, ມີການວາງແຜນກຳລັງແຮງງານເພື່ອຮອງຮັບການເຕີບໂຕຂອງທຸລະກິດ , ມີການສັນຫາ ແລະ ຄັດເລືອກແຮງງານທີ່ມີຄຸນນະພາບ, ມີການຈັດຝຶກອົບຮົມການນຳໃຊ້ເຕັກໂນໂລຊີໃຫ້ສະມາຊິກ ແລະ ມີການສົ່ງເສີມຄວາມຮູ້ ຄວາມເຂົ້າໃຈກ່ຽວກັບກົດໝາຍແຮງງານ ທັງໝົດແມ່ນຢູ່ໃນລະດັບຫລາຍ ດ້ວຍຄ່າສະເລຍ X=0.36 ແລະ ຄ່າ SD=0.10 ຫາ 0.11 (ຕາຕະລາງ 5).

ໃນຕາຕະລາງທີ 6 ສາມາດເຫັນໄດ້ວ່າປະຊາຊົນມີສ່ວນຮ່ວມໃນການວາງແຜນຍຸດທະສາດການມີສ່ວນຮ່ວມໃນການຜະລິດຕະພັນຜ້າໄໝ ໂດຍການໃຊ້ຄວາມຮູ້ຄວາມສາມາດໃນການປະຕິບັດງານຢ່າງເຕັມທີ່, ມີການແບ່ງໂຄງສ້າງຂອງແຜນວຽກງານການຜະລິດຢ່າງລະອຽດ, ມີການຈັດສັນບຸກຄະລາກອນທີ່ໃຊ້ເຂົ້າໃນການຜະລິດຜ້າໄໝ, ມີການຈັດສັນບຸກຄະລາກອນທີ່ໃຊ້ເຂົ້າໃນການຜະລິດຜ້າໄໝ ແລະ ມີການຕິດຕາມປະເມີນຜົນການຜະລິດ ຢູ່ໃນລະດັບ

ຫລາຍ ດ້ວຍຄ່າສະເລຍ X=0.36-0.38 ແລະ ຄ່າ SD=0.10 ຫາ 0.11.

ການມີສ່ວນຮ່ວມດ້ານການເງິນເຂົ້າໃນການຜະລິດ ຜ້າໄໝ ເຫັນວ່າປະຊາຊົນມີແຜນຮອງຮັບຄວາມສ່ຽງດ້ານ ການເງິນ ແລະ ມີແຜນໃນການກູ້ຢືມເງິນຈາກສະຖາບັນ ການເງິນ ແມ່ນຢູ່ໃນລະດັບຫລາຍທີ່ສຸດດ້ວຍຄ່າສະເລຍ X=0.42 ແລະ ຄ່າ SD=0.66 ຫາ 0.72. ສ່ວນການ ຕິດຕາມລາຍຮັບ-ລາຍຈ່າຍຢ່າງສະໝ່ຳສະເໝີ, ມີເງິນທຶນ ພຽງພໍໃນການດຳເນີນທຸລະກິດ, ແລະ ມີເງິນທຶນສຳຮອງ ເພື່ອຈະຂະຫຍາຍກິດຈະການໃນອານາຄົດ ແມ່ນຢູ່ໃນ ລະດັບຫລາຍ ດ້ວຍຄ່າສະເລຍ X=0.35 ຫາ 0.37 ແລະ ຄ່າ SD=0.10 ຫາ 0. 12 (ຕາຕະລາງ 7).

## 4. ວິພາກຜົນ

ຜົນການວິໄຈໃນຄັ້ງນີ້ເຫັນວ່າ ການມີສ່ວນຮ່ວມ ຂອງປະຊາຊົນ ຕໍ່ການພັດທະນາຫັດຖະກຳຜ້າໄໝ ໃນດ້ານ ການຜະລິດ ແລະ ການບໍລິການ ພະລິດຕະພັນຜ້າໄໝ ແລະ ການມີສ່ວນຮ່ວມດ້ານການຕະຫລາດແມ່ນຢູ່ໃນລະດັບ ຫຼາຍຫາຫຼາຍສຸດ. ການມີສ່ວນຮ່ວມດ້ານການນຳໃຊ້ເຕັກໂນ ໂລຊີຂໍ້ມູນຂ່າວສານ ແລະ ການມີສ່ວນຮ່ວມໃນການໝູນ ໃຊ້ທ່າແຮງພາຍໃນເຂົ້າໃນການຜະລິດ ແລະ ບໍລິການ ແມ່ນ ຢູ່ໃນລະດັບປານກາງຫາຫຼາຍ. ສ່ວນການມີສ່ວນຮ່ວມດ້ານ ສີມືແຮງງານໃນການຜະລິດຜ້າໄໝ, ການມີສ່ວນຮ່ວມດ້ານ ການບໍລິຫານຈັດການ ແລະ ການມີສ່ວນຮ່ວມດ້ານການເງິນ ເຂົ້າໃນການຜະລິດຜ້າໄໝ ແມ່ນຢູ່ໃນລະດັບຫຼາຍຫາຫຼາຍ ສຸດ ເຊິ່ງມີຄວາມສອດຄ່ອງກັບຜົນງານວິໄຈຂອງ ດີມາ (2020) ພົບວ່າການມີສ່ວນຮ່ວມໃນການຜະລິດຕະພັນຊຸມ ຊົນສູ່ການແຂ່ງຂັນທາງການຕະຫຼາດໃນຊຸມຊົນ ຈັງຫວັດບູ ລີລຳ ໃນດ້ານການຜະລິດແມ່ນໃນລະດັບຫຼາຍທີ່ສຸດ ແລະ ດ້ານການຕະຫຼາດໃນລະດັບຫຼາຍ ແລະ ຍັງມີຄວາມ ສອດຄ່ອງກັບຜົນງານວິໄຈຂອງ ຄົມນະວົງ ພ້ອມດ້ວຍ ຄະນະ (2013) ທີ່ໄດ້ສຶກສາຄວາມຄິດເຫັນຂອງປະຊາຊົນ ກ່ຽວກັບການພັດທະນາຜະລິດສິນຄ້າຫັດຖະກຳ ຂອງບ້ານ ຊຽງເຫຼັກ, ນະຄອນຫຼວງພະບາງ ພົບວ່າຄວາມຫຼາກຫຼາຍ ດ້ານການອອກແບບ, ຄຸນນະພາບ ແລະ ສີສັນ ເພື່ອຕອບສະ ໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ເພື່ອການ ສົ່ງອອກ ແມ່ນຢູ່ໃນລະດັບຫຼາຍ. ພ້ອມກັນນັ້ນຍັງສອດຄ່ອງ ກັບ ຜົນການວິໄຈຂອງ ໄຊບົນ (2012) ທີ່ໄດ້ສຶກສາປັດໄຈ ທີ່ສົ່ງຜົນຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມ ການທ່ອງທ່ຽວຊຸມຊົນທ່ອງທ່ຽວຜະລິດຕະພັນໂອທ້ອບ ນະວັດວິຖີ ໃນເຂດອຳເພີນາຫົມ ຈັງຫວັດນະຄອນພະນົມ ພົບວ່າໃນດ້ານການມີສ່ວນຮ່ວມຂອງປະຊາຊົນໃນການວາງ ແຜນ ແລະ ຕັດສິນໃຈ, ການມີສ່ວນຮ່ວມໃນການຈັດຕັ້ງ ປະຕິບັດ, ດ້ານການມີສ່ວນຮ່ວມໃນການແບ່ງປັນຜົນ ປະໂຫຍດ ແລະ ການມີສ່ວນຮ່ວມໃນການປະເມີນຜົນເຊິ່ງ ລ້ວນແຕ່ຢູ່ໃນລະດັບຫຼາຍ ແລະ ຍັງກົງກັບຜົນການວິໄຈ ຂອງ ແພດຣັງສີ (2013) ທີ່ໄດ້ສຶກສາການມີສ່ວນຮ່ວມ ຂອງປະຊາຊົນໃນການພັດທະນາທ້ອງຖິ່ນ: ກໍລະນີສຶກສາ ເທດສະບານບ້ານທ່າຫຼວງ ເມືອງມະຂາມ ແຂວງຈັນທະບູລີ ພົບວ່າ ການມີສ່ວນຮ່ວມໃນການຜະລິດທີ່ໄດ້ຮັບຜົນ ປະໂຫຍດເຊິ່ງຢູ່ໃນລະດັບຫຼາຍ ແຕ່ແຕກຕ່າງກັບ ຜົນການ ວິໄຈຂອງ ສຸກຂີ (2012) ທີ່ໄດ້ສຶກສາການມີສ່ວນຮ່ວມ ຂອງຊຸມຊົນໃນການພັດທະນາການທ່ອງທ່ຽວເຊີງນິເວດ ຕະຫຼາດນ້ຳດຳເນີນສະດວກ ແຂວງລາດຊະບູລີ ໃນດ້ານ ການມີສ່ວນຮ່ວມຂອງປະຊາຊົນໃນການວາງແຜນ, ການມີ ສ່ວນຮ່ວມໃນການຈັດຕັ້ງປະຕິບັດ, ທີ່ຢູ່ໃນລະດັບປານກາງ ແລະ ການມີສ່ວນຮ່ວມໃນການຕິດຕາມຜົນການດຳເນີນ ງານທີ່ຢູ່ໃນລະດັບໜ້ອຍ ແລະ ຍັງແຕກຕ່າງກັບ ຜົນການ ວິໄຈຂອງ ເສົາວະລັກຈິນດາ (2012) ໄດ້ສຶກສາການມີສ່ວນ ຮ່ວມຂອງຊຸມຊົນໃນການຈັດການແຫຼ່ງທ່ອງທ່ຽວ: ກໍລະນີ ສຶກສາບ້ານອິນບູລີ ແຂວງສິງບູລີ ພົບວ່າການມີສ່ວນຮ່ວມ ໃນການແບ່ງປັນຜົນປະໂຫຍດທີ່ຢູ່ໃນລະດັບກາງ, ການມີ ສ່ວນຮ່ວມຂອງປະຊາຊົນໃນການວາງແຜນ, ການມີສ່ວນ ຮ່ວມໃນການຈັດຕັ້ງປະຕິບັດ ແລະ ການມີສ່ວນຮ່ວມໃນ ການຕິດຕາມ ແລະ ປະເມີນຜົນ ທີ່ລ້ວນແຕ່ຢູ່ໃນລະດັບ ໜ້ອຍ.

## 5. ສະຫຼຸບ

ການມີສ່ວນຮ່ວມໃນການຜະລິດຫັດຖະກຳຜ້າໄໝ ຂອງປະຊາຊົນບ້ານໂພນໄຊສ່ວນຫຼາຍແລ້ວແມ່ນຢູ່ໃນລະດັບຫຼາຍຫາຫຼາຍສຸດ ໂດຍສະເພາະ ແມ່ນ ການມີສ່ວນຮ່ວມດ້ານການຜະລິດ ແລະ ການບໍລິການ ພະລິດຕະພັນຜ້າໄໝ, ການມີສ່ວນຮ່ວມດ້ານການຕະຫລາດ, ການມີສ່ວນຮ່ວມດ້ານສີມືແຮງງານໃນການຜະລິດຜ້າໄໝ, ການມີສ່ວນຮ່ວມດ້ານການບໍລິຫານຈັດການ ແລະ ການມີສ່ວນຮ່ວມດ້ານການເງິນເຂົ້າໃນການຜະລິດຜ້າໄໝ. ແລະ ຍັງມີບາງດ້ານທີ່ປະຊາຊົນຍັງມີສ່ວນຮ່ວມໃນລະດັບປານກາງ ເຊັ່ນ: ການມີສ່ວນຮ່ວມດ້ານການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການມີສ່ວນຮ່ວມໃນການໝູນໃຊ້ທ່າແຮງພາຍໃນເຂົ້າໃນການຜະລິດ ແລະ ບໍລິການ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິໄຈຂໍປະຕິຍານວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ສະພາແຫ່ງຊາດ. (2008). *ກົດໝາຍວ່າດ້ວຍຫັດຖະກຳ,* ສະພາແຫ່ງຊາດ.

ເສົາວະລັກຈິນດາ, ກ. (2012). *ການມີສ່ວນຮ່ວມຂອງຊຸມຊົນໃນການຈັດການແຫຼ່ງທ່ອງທ່ຽວ: ກໍລະນີສຶກສາອຳເພີອິນບູລີ ຈັງຫວັດສິງບູລີ* [ປື້ມບົດວິທະຍານິພົນ], ມະຫາວິທະຍາໄລກະເສດສາດ.

ໄຊບົນ, ຂ. (2012). *ປັດໄຈທີ່ສົ່ງຜົນຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນການສົ່ງເສີມການທ່ອງທ່ຽວຊຸມຊົນທ່ອງທ່ຽວໂອທັອບນະວັດວິຖີໃນເຂດອຳເພີນາທົມຈັງຫວັດນະຄອນພະນົມ* [ປື້ມບົດວິທະຍານິພົນ], ມະຫາວິທະຍາໄລລາຊະມົງຄຸນທັນບູລີ.

ຄົມນະວົງ, ຄ., ວັນນະສີ, ຈ., ແລະ ທອງຄູນ, ສ. (2013). *ການຜະລິດສິນຄ້າດ້ານຫັດຖະກຳເພື່ອການທ່ອງທ່ຽວ. ກໍລະນີສຶກສາ: ບ້ານ ຊຽງເຫຼັກ ເມືອງຫຼວງພະບາງ* [ບົດໂຄງການຈົບຊັ້ນປະລິນຍາຕີ], ມະຫາວິທະຍາໄລສຸພານຸວົງ.

ສຸກຂີ, ສ. (2012). *ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາການທ່ອງທ່ຽວເຊີງນິເວດຕະຫຼາດນ້ຳດຳເນີນສະດວກຈັງຫວັດລາດຊະບູລີ* [ປື້ມບົດວິທະຍານິພົນ], ມະຫາວິທະຍາໄລມະເລສອນ.

ອິນສົມພອນ, ດ., ແລະ ຈິດຕະພົງ, ສ. (2024). *ຜົນໄດ້ຮັບຈາກການຜະລິດສິນຄ້າຈາກຫັດຖະກຳຕໍ່າແຜ່ນຂອງປະຊາຊົນ ບ້ານ ຊ່າງຄ້ອງ ແລະ ບ້ານຊຽງເຫຼັກ ເມືອງ ແລະ ແຂວງຫຼວງພະບາງ* [ບົດໂຄງການຈົບຊັ້ນປະລິນຍາຕີ], ມະຫາວິທະຍາໄລສຸພານຸວົງ.

ແພດຣັງສີ, ປ. (2013). *ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາທ້ອງຖິ່ນ: ສຶກສາກໍລະນີເທສະບານຕຳບົນທ່າຫຼວງ ອຳເພີມະຂາມ ຈັງຫວັດຈັນທະບູລີ* [ປື້ມບົດວິທະຍານິພົນ], ມະຫາວິທະຍາໄລລາດຊະພັດລຳໄພພັນນີ.

ພະແນກມາດຕະຖານອຸດສາຫະກຳກົມອຸດສາຫະກຳ. (2007). *ການສ້າງມູນຄ່າເພີ່ມໃນຂະບວນການປຸງແຕ່ງຜະລິດຕະພັນໄມ້ ຢູ່ ສປປ ລາວ, ນະຄອນຫຼວງວຽງຈັນ.* ກະຊວງອຸດສາຫະກຳ ແລະ ການຄ້າ.

ດວງດາລາ, ອ., ແລະ ສົມບັດຈະເລີນ, ລ. (2015). *ຜົນໄດ້ຮັບຈາກການສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນແພໄໝ ຂອງຜູ້ປະກອບການຮ້ານອອກພິບຕິກ* [ບົດໂຄງການຈົບຊັ້ນປະລິນຍາຕີ], ມະຫາວິທະຍາໄລສຸພານຸວົງ.

ດົມາ, ອ. (2020). *ປັດໄຈທີ່ສົ່ງຜົນຕໍ່ການພັດທະນາຜະລິດຕະພັນຊຸມຊົນສູ່ການແຂ່ງຂັນທາງການຕະຫຼາດໃນຊຸມຊົນ ຈັງຫວັດບູລີລຳ* [ປື້ມບົດວິທະຍານິພົນ], ມະຫາວິທະຍາໄລລາມຄຳແຫງ.

Government of Tamilnadu. (2015). *Handlooms, handicrafts, Textiles and khadi department*, Khadi, village industries and handicrafts.

Likert, R. (1932). A technique for the measurement of attitudes. *Archives of Psychology*, 22, 14-*55.*

Sioudomphan, S., Kingsada, Y., Thammavong, V., Layasaeng , S., & Ounphouvong, S. (2021). Behaviors towards purchasing goods by foreign tourists in LuangPrabang City. *Souphanouvong University Journal Multidisciplinary Research and Development*, *7*(1), 168–176.

Sampling (n.d.). In *Merriam-Webster's Collegiate Dictionary online* (11th ed.). Retrieved from http://www.merriam-webster.com/dictionary/sampling

Tariq, A.B., &Tapan, C. (2014). Study of growth and instability in raw silk production and marketing in India, *European Journal of Business and Managemen 6* (14).

**ຕາຕະລາງ 1:** ການມີສ່ວນຮ່ວມດ້ານການຜະລິດ ແລະ ການບໍລິການ ພະລິດຕະພັນຜ້າໄໝ

| ລ/ດ | ການມີສ່ວນຮ່ວມດ້ານການຜະລິດ ແລະ ການບໍລິການ | ຈໍານວນ (N) | ຄ່າສະເລ່ຍ $\overline{X}$ | S.D | ລະດັບຄວາມເຫັນ |
|---|---|---|---|---|---|
| 1 | ດ້ານການຊອກຫາຂໍ້ມູນກ່ຽວກັບຄວາມຕ້ອງການຂອງລູກຄ້າເພື່ອນໍາມາພັດທະນາຜະລິດຕະພັນຜ້າໄໝ | 98 | 0.42 | 0.72 | ຫລາຍທີ່ສຸດ |
| 2 | ດ້ານການອອກແບບຜະລິດຕະພັນຜ້າໄໝສອດຄ່ອງກັບຄວາມຕ້ອງການຂອງລູກຄ້າໃນປັດຈຸບັນ | 98 | 0.41 | 0.71 | ຫລາຍ |
| 3 | ດ້ານການຄວບຄຸມຄຸນນະພາບຂອງຜະລິດຕະພັນຜ້າໄໝ | 98 | 0.41 | 0.66 | ຫລາຍ |
| 4 | ດ້ານການຄວບຄຸມຕົ້ນທຶນການຜະລິດຫັດຖະກໍາຜ້າໄໝ | 98 | 0.41 | 0.62 | ຫລາຍ |
| 5 | ດ້ານການພັດທະນາຜະລິດຕະພັນໃຫມ່ທີ່ມີຄວາມແຕກຕ່າງ ແລະ ສ້າງມູນຄ່າເພີ່ມໃຫ້ກັບຜະລິດຕະພັນ | 98 | 0.42 | 0.61 | ຫລາຍທີ່ສຸດ |
| | ຄ່າສະເລ່ຍລວມ | 98 | 0.42 | 0.58 | ຫລາຍ |

ຕາຕະລາງ 2: ການມີສ່ວນຮ່ວມດ້ານການຕະຫລາດ

| ລ/ດ | ການມີສ່ວນຮ່ວມດ້ານການຕະຫລາດ | ຈໍານວນ | $\overline{X}$ | S.D | ລະດັບຄວາມເຫັນ |
|---|---|---|---|---|---|
| 1 | ມີການກໍານົດສ່ວນແບ່ງການຕະຫຼາດຜະລິດຕະພັນຜ້າໄໝ | 98 | 0.42 | 0.60 | ຫລາຍທີ່ສຸດ |
| 2 | ມີການກໍານົດລູກຄ້າເປົ້າຫມາຍຂອງຜະລິດຕະພັນຜ້າໄໝ | 98 | 0.40 | 0.78 | ຫລາຍ |
| 3 | ມີການສ້າງຄວາມໄດ້ປຽບທາງດ້ານລາຄາຜະລິດຕະພັນຜ້າໄໝ | 98 | 0.40 | 0.80 | ຫລາຍ |
| 4 | ມີການຊອກດ້ານຊ່ອງທາງຈັດຈໍາໜ່າຍຜະລິດຕະ | 98 | 0.38 | 0.87 | ຫລາຍ |

| | | | | | |
|---|---|---|---|---|---|
| | ພັນຜ້າໄໝ | | | | |
| 5 | ມີການສົ່ງເສີມການຕະຫຼາດຜະລິດຕະພັນຜ້າໄໝ | 98 | 0.37 | 0.10 | ຫລາຍ |
| | ຄ່າສະເລ່ຍລວມ | 98 | 0.39 | 0.65 | ຫລາຍ |

ຕາຕະລາງ 3: ມີສ່ວນຮ່ວມດ້ານເຕັກໂນໂລຊີຂໍ້ມູນຂ່າວສານ

| ລ/ດ | ມີສ່ວນຮ່ວມດ້ານເຕັກໂນໂລຊີຂໍ້ມູນຂ່າວສານ | ຈຳນວນ (N) | $\overline{X}$ | S.D | ລະດັບ ຄວາມເຫັນດີ |
|---|---|---|---|---|---|
| 1 | ມີການນຳໃຊ້ເຕັກໂນໂລຊີມາໃຊ້ເຂົ້າໃນມີສ່ວນຮ່ວມດ້ານເຕັກໂນໂລຊີຂໍ້ມູນຂ່າວສານຂະບວນການຜະລິດຜ້າໄໝ | 98 | 0.29 | 0.13 | ປານກາງ |
| 2 | ມີການສ້າງຖານຂໍ້ມູນລູກຄ້າໄວ້ຢ່າງສະໝໍ່າສະເໝີ | 98 | 0.28 | 0.13 | ປານກາງ |
| 3 | ມີການພັດທະນາລະບົບຂໍ້ມູນຂ່າວສານການພັດທະນາຜະລິດຕະພັນຜ້າໄໝ | 98 | 0.28 | 0.13 | ປານກາງ |
| 4 | ໄດ້ຮັບຂໍ້ມູນຂ່າວສານກ່ຽວກັບຫັດຖະກຳຜ້າໄໝຈາກໜ່ວຍງານທີ່ກ່ຽວຂ້ອງ | 98 | 0.28 | 0.12 | ປານກາງ |
| 5 | ມີການນຳໃຊ້ເຕັກໂນໂລຊີເຂົ້າໃນການໂຄສະນາຜະລິດຕະພັນຜ້າໄໝ | 98 | 0.27 | 0.12 | ປານກາງ |
| | ຄ່າສະເລ່ຍລວມ | 98 | 0.28 | 0.10 | ປານກາງ |

ຕາຕະລາງ 4: ການມີສ່ວນຮ່ວມໃນການໝູນໃຊ້ທ່າແຮງພາຍໃນເຂົ້າໃນການຜະລິດ ແລະ ບໍລິການ

| ລ/ດ | ການມີສ່ວນຮ່ວມດ້ານການຜະລິດ ແລະ ບໍລິການ | ຈຳນວນ (N) | ຄ່າ ສະເລ່ຍ | ຄ່າຜັນປ່ຽນ ມາດຕະຖານ | ລະດັບ ຄວາມເຫັນດີ |
|---|---|---|---|---|---|
| 1 | ມີຂະບວນການຜະລິດທີ່ຫຼາກຫຼາຍເຂົ້າໃນການຜະລິດຫັດຖະກຳຜ້າໄໝ | 98 | 0.31 | 0.13 | ປານກາງ |
| 2 | ມີການນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຜະລິດຫັດຖະກຳຜ້າໄໝ | 98 | 0.31 | 0.13 | ປານກາງ |
| 3 | ມີໜ່ວຍງານອອກແບບ ແລະ ພັດທະນາລວດລາຍຜ້າ ໄໝ | 98 | 0.32 | 0.12 | ປານກາງ |
| 4 | ມີການນຳໃຊ້ອຸປະກອນທີ່ທັນສະໄໝເຂົ້າໃນການຜະລິດ | 98 | 0.32 | 0.13 | ປານກາງ |
| 5 | ມີການນຳໃຊ້ແຮງງານໃນຊຸມຊົນເຂົ້າໃສ່ໃນການຜະລິດຜ້າໄໝ | 98 | 0.35 | 0.12 | ຫລາຍ |
| | ຄ່າສະເລ່ຍລວມ | 98 | 0.32 | 0.11 | ປານກາງ |

ຕາຕະລາງ 5: ການມີສ່ວນຮ່ວມດ້ານສີມືແຮງງານໃນການຜະລິດຜ້າໄໝ

| ລ/ດ | ການມີສ່ວນຮ່ວມດ້ານບໍລິຫານຊັບພະຍາກອນມະນຸດ | ຈຳນວນ (N) | $\overline{X}$ | S.D | ລະດັບ ຄວາມເຫັນດີ |
|---|---|---|---|---|---|
| 1 | ມີການວາງແຜນກຳລັງແຮງງານເພື່ອຮອງຮັບການເຕີບໂຕຂອງທຸລະກິດ | 98 | 0.36 | 0.10 | ຫລາຍ |
| 2 | ມີການສັນຫາ ແລະ ຄັດເລືອກແຮງງານທີ່ມີຄຸນນະພາບ | 98 | 0.36 | 0.10 | ຫລາຍ |
| 3 | ມີຄວາມຮູ້ ແລະຄວາມເຂົ້າໃຈກ່ຽວກັບກົດໝາຍແຮງງານ | 98 | 0.36 | 0.11 | ຫລາຍ |
| 4 | ມີການຈັດຝຶກອົບຮົມການນຳໃຊ້ເຕັກໂນໂລຊີໃຫ້ສະມາຊິກ | 98 | 0.36 | 0.10 | ຫລາຍ |
| 5 | ມີການໃຫ້ລາງວັນ ແລະ ຜົນຕອບແທນແກ່ສະມາຊິກຜູ້ທີ່ມີຜົນງານດີເດັ່ນ | 98 | 0.37 | 0.10 | ຫລາຍ |
| | **ຄ່າສະເລ່ຍລວມ** | **98** | **0.36** | **0.92** | **ຫລາຍ** |

ຕາຕະລາງ 6: ການມີສ່ວນຮ່ວມດ້ານການບໍລິຫານຈັດການ

| ລ/ດ | ການມີສ່ວນຮ່ວມດ້ານການບໍລິຫານຈັດການ | ຈຳນວນ (N) | $\overline{X}$ | S.D | ລະດັບ ຄວາມເຫັນດີ |
|---|---|---|---|---|---|
| 1 | ມີການວາງແຜນຍຸດທະສາດການພັດທະນາຜະລິດຕະພັນຜ້າໄໝ | 98 | 0.38 | 0.10 | ຫລາຍ |
| 2 | ມີການແບ່ງໂຄງສ້າງຂອງແຜນວຽກງານການຜະລິດຢ່າງລະອຽດ | 98 | 0.37 | 0.11 | ຫລາຍ |
| 3 | ມີການຈັດສັນບຸກຄະລາກອນທີ່ໃຊ້ເຂົ້າໃນການຜະລິດຜ້າໄໝ | 98 | 0.37 | 0.10 | ຫລາຍ |
| 4 | ມີການຈັດສັນງົບປະມານທີ່ໃຊ້ເຂົ້າໃນການຜະລິດຫັດຖະກຳຜ້າໄໝ | 98 | 0.37 | 0.11 | ຫລາຍ |
| 5 | ມີການ ຕິດຕາມປະເມີນຜົນການຜະລິດ ແລະລາຍງານຢ່າງປົກກະຕິ | 98 | 0.36 | 0.11 | ຫລາຍ |
| | ຄ່າສະເລ່ຍລວມ | 98 | 0.37 | 0.10 | ຫລາຍ |

ຕາຕະລາງ 7: ການມີສ່ວນຮ່ວມດ້ານການເງິນເຂົ້າໃນການຜະລິດຜ້າໄໝ

| ລ/ດ | ການມີສ່ວນຮ່ວມດ້ານການເງິນເຂົ້າໃນການຜະລິດຜ້າໄໝ | ຈຳນວນ (N) | $\overline{X}$ | S.D | ລະດັບ ຄວາມເຫັນດີ |
|---|---|---|---|---|---|
| 1 | ມີເງິນທຶນພຽງພໍໃນການດຳເນີນທຸລະກິດ | 98 | 0.36 | 0.11 | ຫລາຍ |
| 2 | ມີການຕິດຕາມລາຍຮັບ-ລາຍຈ່າຍຢ່າງສະ ໝ່ຳສະເໝີ | 98 | 0.37 | 0.10 | ຫລາຍ |

| | | | | | |
|---|---|---|---|---|---|
| 3 | ມີເງິນທຶນສຳຮອງເພື່ອຈະຂະຫຍາຍກິດຈະການໃນອານາຄົດ | 98 | 0.35 | 0.12 | ຫລາຍ |
| 4 | ມີແຜນຮອງຮັບຄວາມສ່ຽງດ້ານການເງິນ | 98 | 0.42 | 0.72 | ຫລາຍທີ່ສຸດ |
| 5 | ມີແຜນໃນການກູ້ຢືມເງິນຈາກສະຖາບັນການເງິນ ຫຼືທະນາຄານ | 98 | 0.42 | 0.66 | ຫລາຍທີ່ສຸດ |
| | ຄ່າສະເລ່ຍລວມ | 98 | 0.38 | 0.63 | ຫລາຍ |